ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ນະຄອນຫລວງວຽງຈັນ, ວັນທີ 11/06/2015

# ແຈ້ງເຊີນ

ຮຽນ: ບັນດາກົມ, ກອງ, ສະພາວິທະຍາສາດ, ສະຖາບັນ, ສູນຕ່າງໆ, ລັດວິສາຫະກິດ, ບໍລິສັດ ທີ່ນັບຖື

ເລື່ອງ: ເຂົ້າຮ່ວມການແຂ່ງຂັນກິລາ ບານເຕະ ແລະ ດຶງເຊືອກ ຊີງຂັນເລຂາທ່ານຄະນະພັກ ກະຊວງ ຍທຂ ເພື່ອຕ້ອນຮັບກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ກະຊວງ ໂຍທາທິການ ແລະ ຂົນສົ່ງ

- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 01 JUN 2015 ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຂະບວນການກິລາ ແລະ ໂຄສະນາ ເພື່ອຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ກະຊວງ ໂຍທາທິການ ແລະ ຂົນສົ່ງ
- ອີງຕາມ ແຜນກະກຽມດຳເນີນ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 159/ຄພປຊ, ລົງວັນທີ 18/08/2014

ເພື່ອຂ່ຳນັບຮັບຕ້ອນ ກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ກະຊວງ ໂຍທາທິການ ແລະ ຂົນສົ່ງ ທີ່ຈະຈັດຂຶ້ນໃນໄວໆນີ້, ເພື່ອສ້າງຂະບວນການໃຫ້ມີບັນຍາກາດຟົດຟື້ນ, ຄະນະຮັບຜິດຊອບການແຂ່ງຂັນກິລາບານເຕະ ແລະ ດຶງເຊືອກ ຂໍຖືເປັນກຽດຮຽນເຊີນບັນດາທ່ານ ພາກສ່ວນຕ່າງໆອ້ອມຂ້າງກະຊວງ ເຂົ້າຮ່ວມການແຂ່ງຂັນກິລາບານເຕະ ແລະ ດຶງເຊືອກ ໃນຄັ້ງນີ້ຈະໄດ້ຈັດຂຶ້ນ ໃນວັນເສົາ, ວັນທີ 27/06/2015 (ກຳນົດເວລາ 1 ວັນ) ຕັ້ງແຕ່ເວລາ 8:00-18:00 ທີ່ເດີ່ນເຈົ້າອານຸວົງ ຫຼືເດີ່ນສະຕາດເກົ່າ (ລາຍລະອຽດວາລະການແຂ່ງຂັນເບິ່ງໃນເອກະສານຊ້ອນທ້າຍ 1). ປະເພດຂອງການແຂ່ງຂັນມີດັ່ງນີ້: (1) ບານເຕະຊາຍຄູ່ກົດຕິມາສັກ "ພະນັກງານການນຳ ແລະ ພະນັກງານອາວຸໂສຫຼັກແຫຼ່ງ" ; (2) ບານເຕະຊາຍທົ່ວໄປແບ່ງເປັນ 4 ທີມ; (3) ບານເຕະຍິງແບ່ງເປັນ 2 ທີມ ແລະ (4) ດຶງເຊືອກຍິງແບ່ງເປັນ 4 ທີມ. (ລາຍລະອຽດການແບ່ງທີມ ແລະ ລະບຽບການແຂ່ງຂັນ ເບິ່ງໃນເອກະສານຊ້ອນທ້າຍທີ 2 ແລະ 3).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ, ເຂົ້າຮ່ວມແຂ່ງຂັນ, ຮ່ວມຊົມ ແລະ ເຊຍ ເພື່ອເຮັດໃຫ້ກິດຈະກຳ ການແຂ່ງຂັນກິລາໃນຄັ້ງນີ້ ມີບັນຍາກາດຟົດຟື້ນມ່ວນຊື່ນ ແລະ ມີເນື້ອໃນຄວາມໝາຍອັນເລິກເຊິ່ງ.

ໝາຍເຫດ:

- ໃຫ້ແຕ່ລະທີມສົ່ງລາຍຊື່ ໃຫ້ຄະນະກຳມະການກ່ອນ ວັນທີ 18/6/2015
- ໃນວັນແຂ່ງ ໃຫ້ແຕ່ລະທີມໃສ່ຊຸດແຂ່ງຂັນຂອງທີມຕົນມາພ້ອມເພື່ອເຂົ້າຮ່ວມພິທີເປີດການແຂ່ງຂັນ
- ໃຫ້ແຕ່ລະພາກສ່ວນສົ່ງລາຍຊື່ ພະນັກງານຊ່ວຍວຽກ ໃນກິດຈະກຳຄັ້ງນີ້ ພາກສ່ວນລະ 2 ທ່ານ, ຍິງ 1 ທ່ານ.

**ຫົວໜ້າຄະນະຮັບຜິດຊອບ**

**ກິລາບານເຕະ ແລະ ດຶງເຊືອກ**

**ສິດທິພອນ ບຸບຜາວັນ**

ຕິດຕໍ່ສອບຖາມເພີ່ມເຕີມ:

ທ່ານ ທອງດອນ ຈັນທະລາ (020) 2203 3971, 5553 4289

### ເອກະສານຊ້ອນທ້າຍ 1:

## ວາລະການແຂ່ງຂັນກິລາບານເຕະ ແລະ ດຶງເຊືອກຊີງຂັນ ທ່ານເລຂາຄະນະພັກ ກະຊວງ ຍທຂ

## ຄັ້ງວັນທີ 27/06/2015 ທີ່ ສະໜາມກິລາ ເຈົ້າອານຸວົງ

| ເວລາ | ລາຍການ | ຜູ້ຮັບຜິດຊອບ |
|---|---|---|
| 7:30-8:00 | ເຕົ້າໂຮມນັກກິລາ ແລະ ແຂກເຂົ້າຮ່ວມ | ທີ່ສະໜາມກິລາ ເຈົ້າອານຸວົງ |
| 8:00-8:30 | ເຕົ້າໂຮມນັກກິລາ ແລະ ແຂກເຂົ້າຮ່ວມ | ທີ່ສະໜາມກິລາ ເຈົ້າອານຸວົງ |
| 8:00-8:15 | ກ່າວຈຸດປະສົງຂອງການແຂ່ງຂັນ | ທ່ານ ບຸນຈັນ ສິນຣາຊະວົງ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ |
| 8:15-8:30 | ປະທານການແຂ່ງຂັນ ກ່າວເປີດພິທີ | ທ່ານ ດຣ ບຸນຈັນ ສິນທະວົງ ລັດຖະມົນຕີວ່າການ ກະຊວງ ຍທຂ |
| 8:30-9:30 | ຄູ່ກິຕິມາສັກ ພະນັກງານການນຳ ແລະ ພະນັກງານອາວຸໂສຫຼັກແຫຼ່ງ ພົບກັບທີມ ອາວຸດໂສລັດວິສາຫະກິດ | ກຳມະການປະຈຳສະໜາມ |
| 9:30-10:50 | (ກະຊວງ ຍທຂ ທີມ I) ພົບກັບ (ກະຊວງ ຍທຂ ທີມ IV) | ກຳມະການປະຈຳສະໜາມ |
| 10:05-10:15 | ດຶງເຊືອກຍິງ (ທີມ I) ພົບກັບ (ທີມ IV) (ຊ່ວງພັກເຄິ່ງເຕະບານ ຄູ່ທີ 1) | ຄະນະຮັບຜິດຊອບ ບານເຕະ ແລະ ດຶງເຊືອກ |
| 10:50-12:10 | (ກະຊວງ ຍທຂ ທີມ II) ພົບກັບ (ກະຊວງ ຍທຂ ທີມ III) | ກຳມະການປະຈຳສະໜາມ |
| 10:25-10:35 | ດຶງເຊືອກຍິງ (ທີມ II) ພົບກັບ (ທີມ III) (ຊ່ວງພັກເຄິ່ງເຕະບານ ຄູ່ທີ 2) | ຄະນະຮັບຜິດຊອບ ບານເຕະ ແລະ ດຶງເຊືອກ |
| 12:10-13:30 | ພັກຜ່ອນ | ຕາມອັດທະຍາໃສ |
| 13:30-15:00 | ແຂ່ງຂັນບານເຕະ ຊີງອັນດັບທີ 3 | ກຳມະການປະຈຳສະໜາມ |
| 14:10-14:20 | ດຶງເຊືອກຍິງ ຊີງອັນດັບທີ 3 (ຊ່ວງພັກເຄິ່ງເຕະບານ ຊີງທີ 3) | ຄະນະຮັບຜິດຊອບ ບານເຕະ ແລະ ດຶງເຊືອກ |
| 15:00-16:30 | ແຂ່ງຂັນບານເຕະ ຊີງຊະນະເລີດ | ກຳມະການປະຈຳສະໜາມ |
| 15:40-14:50 | ດຶງເຊືອກຍິງ ຊີງຊະນະເລີດ (ຊ່ວງພັກເຄິ່ງເຕະບານ ຊີງທີ 1) | ຄະນະຮັບຜິດຊອບ ບານເຕະ ແລະ ດຶງເຊືອກ |
| 16:30-17:30 | ແຂ່ງຂັນທີມບານເຕະຍິງ ຊີງລາງວັນ | ກຳມະການປະຈຳສະໜາມ |
| 17:30-18:00 | ປະທານການແຂ່ງຂັນ ມອບລາງວັນ ແລະ ກ່າວປິດພິທີ | ດຣ. ບຸນຈັນ ສິນທະວົງ ລັດຖະມົນຕີວ່າການ ກະຊວງ ຍທຂ |

## ເອກະສານຊ້ອນທ້າຍ 2:

## ການແບ່ງທີມແຂ່ງຂັນບານເຕະ ແລະ ດຶງເຊືອກ ເພື່ອ ຊີງຂັນ ເລຂາ ພັກ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຄັ້ງວັນທີ 27/06/2015

I. <u>ບານເຕະ ຄູ່ກິດຕິມາສັກ (ພະນັກງານການນຳ ແລະ ພະນັກງານອາວຸໂສຫຼັກແຫຼ່ງແບ່ງເປັນ 2 ທີມ)</u>

1.1 ພະນັກງານການນຳ ແລະ ພະນັກງານອາວຸໂສຫຼັກແຫຼ່ງ, ທີມ I (ໃສ່ຊຸດເສື້ອ ສີຟ້າ)

1. ຫ້ອງການກະຊວງ
2. ກົມຈັດຕັ້ງ ແລະ ພະນັກງານ
3. ກົມແຜນການ ແລະ ການຮ່ວມມື
4. ກົມຂົວທາງ
5. ກົມກວດກາ
6. ສະພາວິທະຍາສາດ ແລະ ເຕັກໂນໂລຊີ
7. ລັດວິສາຫະກິດກໍ່ສ້າງຄົມມະນາຄົມ
8. ກົມຂົນສົ່ງ
9. ກົມການເງິນ
10. ກົມໂຍທາທິການທາງນ້ຳ
11. ກົມທາງລົດໄຟ
12. ກອງຄຸ້ມຄອງທາງລົດໄຟ
13. ລັດວິສາຫະກິດກໍ່ສ້າງທາງເລກ 8

1.2 ພະນັກງານການນຳ ແລະ ພະນັກງານອາວຸໂສຫຼັກແຫຼ່ງ, ທີມ II (ໃສ່ຊຸດເສື້ອ ສີແດງ)

1. ກົມການບິນພົນລະເຮືອນ
2. ກອງຄຸ້ມຄອງການຈະລາຈອນທາງອາກາດ
3. ກອງຄຸ້ມຄອງສະໜາມບິນ
4. ລັດວິສາຫະກິດການບິນລາວ
5. ກົມເຄຫາ ແລະ ຜັງເມືອງ
6. ສະຖາບັນ ຍທຂ
7. ຫ້ອງການດັດສົມນ້ຳປະປາ
8. ສູນຝຶກ ຍທຂ
9. ລັດວິສາຫະກິດວິສະວະກຳຄົມມະນາຄົມ
10. ລັດວິສາຫະກິດສຳຫຼວດ-ອອກແບບ ແລະ ວິໄຈວັດສະດຸກໍ່ສ້າງ

II. <u>ທີມບານເຕະຊາຍຮຸ້ນທົ່ວໄປແບ່ງເປັນ 4 ທີມ</u>

2.1 ກະຊວງ ຍທຂ ທີມ I (ໃສ່ຊຸດເສື້ອ ສີຂຽວ)

1. ຫ້ອງການກະຊວງ
2. ກົມຈັດຕັ້ງ ແລະ ພະນັກງານ
3. ກົມແຜນການ ແລະ ການຮ່ວມມື
4. ກົມຂົວທາງ
5. ກົມກວດກາ
6. ສະພາວິທະຍາສາດ ແລະ ເຕັກໂນໂລຊີ
7. ລັດວິສາຫະກິດກໍ່ສ້າງຄົມມະນາຄົມ

2.2 ກະຊວງ ຍທຂ ທີມ II (ໃສ່ຊຸດເສື້ອ ສີເຫຼືອງ)

1. ກົມຂົນສົ່ງ
2. ກົມການເງິນ
3. ກົມໂຍທາທິການທາງນ້ຳ
4. ກົມທາງລົດໄຟ
5. ກອງຄຸ້ມຄອງທາງລົດໄຟ
6. ລັດວິສາຫະກິດກໍ່ສ້າງທາງເລກ 8

2.3 ກະຊວງ ຍທຂ ທີມ III (ໃສ່ຊຸດເສື້ອ ສີຂາວ)

1. ກົມການບິນພົນລະເຮືອນ
2. ກອງຄຸ້ມຄອງການຈະລາຈອນທາງອາກາດ
3. ກອງຄຸ້ມຄອງສະໜາມບິນ
4. ລັດວິສາຫະກິດການບິນລາວ

2.4 ກະຊວງ ຍທຂ ທີມ IV (ໃສ່ຊຸດເສື້ອ ສີສົ້ມ)

1. ກົມເຄຫາ ແລະ ຜັງເມືອງ
2. ສະຖາບັນ ຍທຂ
3. ຫ້ອງການດັດສົມນ້ຳປະປາ
4 ສູນຝຶກ ຍທຂ
5. ລັດວິສາຫະກິດວິສະວະກຳຄົມມະນາຄົມ
6. ລັດວິສາຫະກິດສຳຫຼວດ-ອອກແບບ ແລະ ວິໄຈວັດສະດຸກໍ່ສ້າງ

## III. <u>ທີມບານເຕະຍິງແບ່ງເປັນ 2 ທີມ</u>

3.1 ກະຊວງ ຍທຂ, ທີມຍິງ I (ໃສ່ຊຸດເສື້ອ ສີຟ້າ)

1. ຫ້ອງການກະຊວງ
2. ກົມຈັດຕັ້ງ ແລະ ພະນັກງານ
3. ກົມແຜນການ ແລະ ການຮ່ວມມື
4. ກົມຂົວທາງ
5. ກົມກວດກາ
6. ສະພາວິທະຍາສາດ ແລະ ເຕັກໂນໂລຊີ
7. ລັດວິສາຫະກິດກໍ່ສ້າງຄົມມະນາຄົມ
8. ກົມຂົນສົ່ງ
9. ກົມການເງິນ
10. ກົມໂຍທາທິການທາງນ້ຳ
11. ກົມທາງລົດໄຟ
12. ກອງຄຸ້ມຄອງທາງລົດໄຟ
13. ລັດວິສາຫະກິດກໍ່ສ້າງທາງເລກ 8

3.2 ກະຊວງ ຍທຂ, ທີມຍິງ II (ໃສ່ຊຸດເສື້ອ ສີແດງ)

1. ກົມການບິນພົນລະເຮືອນ
2. ກອງຄຸ້ມຄອງການຈະລາຈອນທາງອາກາດ
3. ກອງຄຸ້ມຄອງສະໜາມບິນ
4. ລັດວິສາຫະກິດການບິນລາວ
5. ກົມເຄຫາ ແລະ ຜັງເມືອງ
6. ສະຖາບັນ ຍທຂ
7. ຫ້ອງການດັດສົມນ້ຳປະປາ
8. ສູນຝຶກ ຍທຂ
9. ລັດວິສາຫະກິດວິສະວະກຳຄົມມະນາຄົມ
10. ລັດວິສາຫະກິດສຳຫຼວດ-ອອກແບບ ແລະ ວິໄຈວັດສະດຸກໍ່ສ້າງ

## IV. ດຶງເຊືອກຍິງ ແບ່ງເປັນ 4 ທີມ

**4.1 ກະຊວງ ຍທຂ ທີມ I (ໃສ່ຊຸດເສື້ອ ສີຂຽວ)**

1. ຫ້ອງການກະຊວງ
2. ກົມຈັດຕັ້ງ ແລະ ພະນັກງານ
3. ກົມແຜນການ ແລະ ການຮ່ວມມື
4. ກົມຂົວທາງ
5. ກົມກວດກາ
6. ສະພາວິທະຍາສາດ ແລະ ເຕັກໂນໂລຊີ
7. ລັດວິສາຫະກິດກໍ່ສ້າງຄົມມະນາຄົມ

**4.2 ກະຊວງ ຍທຂ ທີມ II (ໃສ່ຊຸດເສື້ອ ສີເຫຼືອງ)**

1. ກົມຂົນສົ່ງ
2. ກົມການເງິນ
3. ກົມໂຍທາທິການທາງນ້ຳ
4. ກົມທາງລົດໄຟ
5. ກອງຄຸ້ມຄອງທາງລົດໄຟ
6. ລັດວິສາຫະກິດກໍ່ສ້າງທາງເລກ 8

**4.3 ກະຊວງ ຍທຂ ທີມ III (ໃສ່ຊຸດເສື້ອ ສີຂາວ)**

1. ກົມການບິນພົນລະເຮືອນ
2. ກອງຄຸ້ມຄອງການຈະລາຈອນທາງອາກາດ
3. ກອງຄຸ້ມຄອງສະໜາມບິນ
4. ລັດວິສາຫະກິດການບິນລາວ

**4.4 ກະຊວງ ຍທຂ ທີມ IV (ໃສ່ຊຸດເສື້ອ ສີສົ້ມ)**

1. ກົມເຄຫາ ແລະ ຜັງເມືອງ
2. ສະຖາບັນ ຍທຂ
3. ຫ້ອງການດັດສົມນ້ຳປະປາ
4. ສູນຝຶກ ຍທຂ
5. ລັດວິສາຫະກິດວິສະວະກຳຄົມມະນາຄົມ
6. ລັດວິສາຫະກິດສຳຫຼວດ-ອອກແບບ ແລະ ວິໄຈວັດສະດຸກໍ່ສ້າງ

[redacted]

ກະຊວງ ໂຍທາທິການ ແລະ ຂົນສົ່ງ

## ເອກະສານຊ້ອນທ້າຍ 2:

## ກົດລະບຽບການແຂ່ງຂັນເຕະບານ ແລະ ດຶງເຊືອກ

## ຄຳນັບຮັບຕ້ອນກອງປະຊຸມໃຫຍ່ ອົງຄະນະພັກກະຊວງ ໂຍທາທິການ ແລະ ຂົນສົ່ງ ຄັ້ງທີ IV

ດັ່ງນັ້ນ; ທາງຄະນະຮັບຜິດຊອບຈັດການແຂ່ງຂັນຂະບວນການເຕະບານ ແລະ ດຶງເຊືອກ ເພື່ອຄຳນັບຮັບຕ້ອນກອງປະຊຸມໃຫຍ່ ອົງຄະນະພັກກະຊວງ ໂຍທາທິການ ແລະ ຂົນສົ່ງ ຄັ້ງທີ IV ທີ່ຈະຈັດຂຶ້ນໃນມໍ່ໆ ນີ້; ສະນັ້ນຈຶ່ງໄດ້ອອກກົດລະບຽບການແຂ່ງຂັນເພື່ອຄວາມສາມັກຄີ ແລະ ມິດຕະພາບ ຂອງແຕ່ລະພາກສ່ວນ, ດັ່ງລາຍລະອຽດລຸ່ມນີ້:

### ມາດຕາ 1 : ວ່າດ້ວຍຕົວນັກກິລາ ເຕະບານ

1.1 ຈຳນວນນັກກິລາແຕ່ລະທີມ ຕ້ອງແມ່ນພະນັກງານສັງກັດຢູ່ ແຕ່ລະກົມກອງ ທີ່ກ່ຽວຂ້ອງ ແລະ ກຳນົດໃຫ້ ບໍ່ຈຳກັດຄົນ ຂອງແຕ່ລະທີມ ແລະ ສົ່ງລາຍຊື່ນັກກິລາ; ເບີເສື້ອ ແລະ ພ້ອມ ລະບຸນັກກິລາຜູ້ໃດເຄີຍເຕະ ສາຍ ກ ມາກ່ອນ; ໃຫ້ ຄະນະຮັບຜິດຊອບຈັດການແຂ່ງຂັນ ກ່ອນວັນພະຫັດ ທີ 19 ມິຖຸນາ 2015.

1.2 ພ້ອມ ສົ່ງລາຍຊື່ ຄະນະນຳທີມ; ຄູຝຶກ ກ່ອນວັນພະຫັດ ທີ 18 ມິຖຸນາ 2015. ເພື່ອຄວາມສະດວກໃນການຕິດຕາມກວດກາ ຂອງຄະນະຮັບຜິດຊອບຈັດການແຂ່ງຂັນ ແລະ ກຳມະການ.

1.3 ກຳນົດໃຫ້ແຕ່ລະທີມສາມາດເອົານັກກິລາ ທີ່ເຄີຍເຕະບານສາຍ ກ ( ລາວພຣີເມຍລີກລະຫວ່າງ ປີ 2012-2014; ສ່ວນ ປີ 2015 ບໍ່ໃຫ້ລົງເຕະ) ໄດ້ພຽງແຕ່ 05 ຄົນ ເທົ່ານັ້ນ (ແຕ່ໃນຈຳນວນ 05 ຄົນ ສາມາດລົງເດີ່ນຕົວຈິງ ເວລາແຂ່ງຂັນ ໄດ້ພຽງ ແຕ່ 02 ຄົນ; ສ່ວນອີກ 03 ຄົນຍັງເຫຼືອ ຖ້າຢາກລົງ ຕ້ອງມີການປ່ຽນຕົວ ສະເພາະນັກກິລາ ທີ່ເຄີຍເຕະບານ ສາຍ ກ ເທົ່ານັ້ນ) ເພື່ອຄວາມສະເໝີພາບໃຫ້ແຕ່ລະພາກສ່ວນອື່ນ.

1.4 ການປ່ຽນຕົວນັກກິລາ ຄົນອື່ນໆ ທີ່ບໍ່ແມ່ນ ສາຍ ກ ແມ່ນບໍ່ຈຳກັດ; ແຕ່ເມື່ອປ່ຽນຕົວອອກແລ້ວແມ່ນບໍ່ສາມາດເຂົ້າສະໜາມການແຂ່ງຂັນຄືນໄດ້ອີກ ຂອງສະເພາະນັດດັ່ງກ່າວ.

### ມາດຕາ 2 : ວ່າດ້ວຍລະບຽບການແຂ່ງຂັນ ເຕະບານ

2.1 ກຳນົດວັນແຂ່ງຂັນ ແມ່ນວັນເສົາ ທີ 27 ມິຖຸນາ 2015; ສະໜາມແຂ່ງຂັນ ແມ່ນ ເດີ່ນເຈົ້າອານຸວົງ ຫລື ເດີ່ນສະຕາດ ( ສ່ວນຕາຕະລາງການແຂ່ງຂັນ ຂອງແຕ່ລະທີມ ມີເອກະສານຊ້ອນທ້າຍ )

2.2 ທຸກໆ ທີມຕ້ອງມາຮອດ ເດີ່ນກ່ອນການແຂ່ງຂັນ 01 ຊົ່ວໂມງ ເພື່ອການກະກຽມ.

2.3 ກຳນົດໃຊ້ເວລາການແຂ່ງຂັນ ລວມ 70 ນາທີ; ເຄິ່ງທຳອິດ 35 ນາທີ; ເຄິ່ງສອງ 35 ນາທີ; ເວລາພັກຜ່ອນຊ່ວງໝົດ ເຄິ່ງທຳອິດ ແມ່ນ 10 ນາທີ.

2.4 ໃຫ້ນັກກິລາ ແຕ່ລະທີມ ມີອຸປະກອນ ຄົບຊຸດ ເຊັ່ນ: ເກີບດຸມເຕະບານ, ຖົງຕີນຂາຍາວ; ສະໜັບແຂ້ງ; ຖ້າແມ່ນຜູ້ຮັກສາປະຕູ ກໍ່ຕ້ອງມີ ຊົບມື ຮັບບານ ( ເພື່ອຄວາມປອດໄພ); ຖ້າຫາກ

ບໍ່ຄົບຢ່າງໃດ ຢ່າງໜຶ່ງ ທາງກຳມະການ ແລະ ຄະນະຮັບຜິດຊອບການແຂ່ງຂັນຈະບໍ່ອະນຸຍາດ ໃຫ້ເຂົ້າຮ່ວມການແຂ່ງຂັນ ຈົນກວ່າອຸປະກອນ ຈະຄົບ.

2.5 ນັກກິລາ ຕ້ອງແຈ້ງລາຍຊື່ ຢ່າງຈະແຈ້ງ; ເບີເສື້ອ ທີ່ແຕກຕ່າງກັນ; ເພື່ອຄວາມສະດວກໃນການ ກວດກາ ແລະ ປ່ຽນຕົວ ເຂົ້າ-ອອກ ຂອງນັກກິລາ.

2.6 ກຳມະການ ຈະມີບັດການປ່ຽນຕົວນັກກິລາແຕ່ລະຄົນ ໃຫ້ຄູຝຶກ; ດັ່ງນັ້ນ ຕ້ອງໄດ້ຮັບການຢັ້ງຢືນ (ລາຍເຊັນ) ຈາກຄູຝຶກກ່ອນ ຈຶ່ງສາມາດປ່ຽນຕົວ ນັກກິລາໄດ້.

2.7 ຖ້ານັກກິລາ ຄົນໃດ ຫາກຖືກໂທດ ບັດເຫລືອງ 02 ບັດ ( ລວມເປັນ ບັດແດງ) ຈະຖືກໂທດ ໃຫ້ອອກຈາກການແຂ່ງຂັນ ແລະ ບໍ່ສາມາດລົງແຂ່ງຂັນໃນນັດຕໍ່ໄປໄດ້.

**ມາດຕາ 3 : ລາງວັນສຳລັບການແຂ່ງຂັນ ເຕະບານ**

3.1 ທີມ ທີ່ສາມາດຍາດລາງວັນຊະນະເລີດ ອັນດັບທີ I ຈະໄດ້ຮັບຂັນ 1 ໜ່ວຍ

3.2 ທີມ ທີ່ສາມາດຍາດລາງວັນຮອງຊະນະເລີດ ອັນດັບທີ II ຈະໄດ້ຮັບຂັນ 1 ໜ່ວຍ

3.3 ທີມ ທີ່ສາມາດຍາດ ອັນດັບທີ III ຈະໄດ້ຮັບຂັນ 1 ໜ່ວຍ

3.4 ສະເພາະ ( ເຕະບານຍິງ) ທີ I ຈະໄດ້ຮັບຂັນ 1 ໜ່ວຍ

**ມາດຕາ 4 : ວ່າດ້ວຍລະບຽບການແຂ່ງຂັນ ດຶງເຊືອກ ( ສະເພາະແມ່ຍິງ ເທົ່ານັ້ນ )**

4.1 ຈຳນວນນັກກິລາ ດຶງເຊືອກ ແມ່ນກຳນົດເອົາ 40 ຄົນ

4.2 ການແຂ່ງຂັນ ແມ່ນ ເອົາທີມທີ່ ຊະນະ 2 ພາຍໃນ 3 ຂອງຕານ; ເພື່ອຜ່ານເຂົ້າຮອບຕໍ່ໄປ.

**ມາດຕາ 5 : ລາງວັນສຳລັບການແຂ່ງຂັນ ດຶງເຊືອກ ( ສະເພາະແມ່ຍິງ ເທົ່ານັ້ນ )**

5.1 ທີມ ທີ່ສາມາດຍາດລາງວັນຊະນະເລີດ ອັນດັບທີ I ຈະໄດ້ຮັບຂັນ 1 ໜ່ວຍ

5.2 ທີມ ທີ່ສາມາດຍາດລາງວັນຮອງຊະນະເລີດ ອັນດັບທີ II ຈະໄດ້ຮັບຂັນ 1 ໜ່ວຍ

5.3 ທີມ ທີ່ສາມາດຍາດ ອັນດັບທີ III ຈະໄດ້ຮັບຂັນ 1 ໜ່ວຍ

**ມາດຕາ 6 : ກົດລະບຽບ ສະບັບນີ້ ( ຜ່ານການເອກະພາບ ເຫັນດີ ຈາກທຸກໆພາກສ່ວນ) ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.**

ນະຄອນຫຼວງວຽງຈັນ, ວັນທີ 18/6/2016

**ຄະນະຮັບຜິດຊອບຈັດການ**

**ແຂ່ງຂັນບານເຕະ ແລະ ດຶງເຊືອກ**